ຊື່ລູກຄ້າ ______________________
ເລກທີສຳນວນ ______________________
ວັນທີ ______________________
ຄາວຕີ້ ______________________
ເບີໂທລະສັບຂອງຄາວຕີ້ ______________________

# ກົດລະບຽບການລາຍງານ CalWORKs ຂອງທ່ານໄດ້ມີການປ່ຽນແປງ. ກະລຸນາອ່ານເອກະສານນີ້ຢ່າງຮອບຄອບ

ນັບຕັ້ງແຕ່____________________(ວັນທີ), ສຳນວນ CalWORKs ຂອງທ່ານຈະປ່ຽນແປງຈາກການລາຍງານເຄິ່ງປີເປັນລາຍງານປະຈຳປີ. ອັນນີ້ກໍ່ເພາະວ່າ ສຳນວນຂອງທ່ານຈະບໍ່ລວມເອົາການຊ່ວຍເຫຼືອຜູ້ໃຫຍ່ອີກ. ທ່ານຈະບໍ່ຕ້ອງປະກອບ SAR 7 ປີລະເທື່ອອີກ. ດຽວນີ້ ທ່ານຈະຕ້ອງລາຍງານປີລະເທື່ອຕາມແບບຟອມການກຳນົດຄືນໃໝ່ປະຈຳປີຂອງທ່ານ (SAWS 2 PLUS).

ອັນນີ້ຈະບໍ່ແມ່ນເລື່ອງໃໝ່ ເນື່ອງຈາກວ່າ ອັນນີ້ແມ່ນສຳນວນຂອງ SAR ທີ່ດຳເນີນການຢູ່ແລ້ວ.

ແຈ້ງການນີ້ມີລາຍລະອຽດກ່ຽວກັບຂໍ້ກຳນົດການລາຍງານປະຈຳປີ. ໃຫ້ຖາມກັບພະນັກງານຂອງທ່ານ ຫຼືໂທຫາທາງຄາວຕີ້ ຖ້າທ່ານມີຄຳຖາມກ່ຽວກັບສິ່ງທີ່ຈະລາຍງານ ແລະຈະລາຍງານເມື່ອໃດ.

ທ່ານຈະໄດ້ຮັບແຈ້ງການແຍກຕ່າງຫາກກ່ຽວກັບການປ່ຽນແປງໃດໜຶ່ງຕໍ່ກັບຂໍ້ກຳນົດການລາຍງານ CalFresh ຂອງທ່ານ.

## ກົດລະບຽບການລາຍງານ

ພາຍໃຕ້ການລາຍງານປະຈຳປີ ທ່ານບໍ່ມີແບບຟອມທີ່ທ່ານຕ້ອງປະກອບໃສ່ ແລະສົ່ງກັບຄືນ ນອກເໜືອໄປຈາກການກຳນົດຄືນໃໝ່ປະຈຳປີ.

ທ່ານຍັງຈະໄດ້ຮັບໜັງສືນັດໝາຍທາງໄປສະນີນຳ ເມື່ອການກຳນົດຄືນໃໝ່ຂອງທ່ານຄົບກຳນົດ. ການຊ່ວຍເຫຼືອຂອງທ່ານຈະຢຸດ ຖ້າທ່ານບໍ່ໄປຕາມການນັດໝາຍການກຳນົດຄືນໃໝ່ຂອງທ່ານ ແລະບໍ່ໄດ້ນັດໝາຍໄປຄືນໃນຕອນທ້າຍເດືອນ.

ຕົວຢ່າງ: ໃນວັນທີ 18 ມີນາ, ທ່ານໄດ້ຮັບໜັງສືນັດໝາຍຈາກທາງຄາວຕີ້ ທີ່ເວົ້າເຖິງການນັດໝາຍການກຳນົດຄືນໃໝ່ຂອງທ່ານໃນວັນທີ 4 ເມສາ. ຖ້າທ່ານບໍ່ໄປຕາມການນັດໝາຍ ແລະບໍ່ໄດ້ນັດໄປໃນທ້າຍເດືອນເມສາ, ສຳນວນຂອງທ່ານຈະຖືກຢຸດໄປໃນວັນທີ 30 ເມສາ.

## ກົດລະບຽບລະດັບການລາຍງານລາຍໄດ້ (IRT)

ທ່ານຍັງຈຳເປັນຕ້ອງລາຍງານພາຍໃນ 10 ວັນ ຖ້າລາຍໄດ້ປະຈຳເດືອນທັງໝົດຂອງທ່ານໄດ້ຫຼາຍກວ່າຈຳນວນເງິນໃນ IRT. ທ່ານຕ້ອງລາຍງານລາຍໄດ້ໃຫ້ກັບທາງຄາວຕີ້**ພາຍໃນ 10 ວັນ**. ດ້ວຍ “ລາຍໄດ້ປະຈຳເດືອນທັງໝົດ” ພວກເຮົາໝາຍເຖິງເງິນ**ໃດໜຶ່ງ** ທີ່ທ່ານໄດ້ຮັບ. ທຸກເທື່ອທີ່ຈຳນວນເງິນໃນ IRT ຂອງທ່ານປ່ຽນແປງ, ທາງຄາວຕີ້ຈະບອກທ່ານເປັນລາຍລັກອັກສອນວ່າ ລະດັບລາຍໄດ້ໃໝ່ແມ່ນເທົ່າໃດ.

ພາຍໃຕ້ການລາຍງານປະຈຳປີ, ເມື່ອທ່ານລາຍງານລາຍໄດ້ທີ່ກາຍຈາກຈຳນວນ IRT ຂອງທ່ານ, ທາງຄາວຕີ້ອາດຈະຫຼຸດເງິນຊ່ວຍເຫຼືອຂອງທ່ານລົງ ຫຼືຢຸດໄປ.

ຕົວຢ່າງ: ຖ້າ IRT ຂອງທ່ານແມ່ນ $900 ແລະທ່ານມີລາຍໄດ້ $800 ທ່ານບໍ່ຕ້ອງລາຍງານການປ່ຽນແປງຈົນກວ່າມີການກຳນົດຄືນໃໝ່ຄັ້ງຕໍ່ໄປ. ຖ້າທ່ານມີລາຍໄດ້ $901 ຫຼືຫຼາຍກວ່ານັ້ນ, ທ່ານຕ້ອງລາຍງານໃຫ້ກັບທາງຄາວຕີ້ພາຍໃນ 10 ວັນ. ເງິນຊ່ວຍເຫຼືອຂອງທ່ານຈະຫຼຸດລົງ ຫຼືຢຸດໄປ. ທາງຄາວຕີ້ຈະແຈ້ງໃຫ້ທ່ານຊາບ 10 ວັນກ່ອນມີການປ່ຽນແປງ. ຖ້າເງິນຊ່ວຍເຫຼືອຂອງທ່ານຖືກຫຼຸດລົງ, ທາງຄາວຕີ້ຍັງຈະບອກໃຫ້ທ່ານຮູ້ເຖິງຈຳນວນເງິນ IRT ໃໝ່ຂອງທ່ານນຳ.

## ກົດລະບຽບການລາຍງານທີ່ຕ້ອງໄດ້ເຮັດ

ພາຍໃຕ້ກົດລະບຽບການລາຍງານ, ທ່ານຕ້ອລາຍງານທຸກຄັ້ງທີ່ມີຄົນຍ້າຍເຂົ້າ ຫຼືຍ້າຍອອກຈາກຄອບຄົວຂອງທ່ານ.
ກົດລະບຽບການລາຍງານບອກວ່າ ທ່ານຕ້ອງລາຍງານການປ່ຽນແປງເຄິ່ງປີຕໍ່ໄປນີ້ໂດຍທາງປາກເປົ່າ ຫຼືເປັນລາຍລັກອັກສອນ ພາຍໃນ 10 ວັນຂອງການປ່ຽນແປງ:

- ລາຍໄດ້ທີ່ກາຍຈາກ IRT;
- ມີຄົນຍ້າຍເຂົ້າ ຫຼືຍ້າຍອອກຈາກເຮືອນຂອງທ່ານ;
- ມີການປ່ຽນທີ່ຢູ່;
- ມີສະຖານະເປັນນັກໂທດຫຼົບໜີ; ຫຼື
- ສານພົບວ່າ ມີຜູ້ໃດຜູ້ໜຶ່ງໄດ້ລະເມີດເງື່ອນໄຂຕ້ອງລາຍງານຕົວເປັນປົກກະຕິ ຫຼືຝາກໂທດຢູ່.

## ກົດລະບຽບການລາຍງານແບບສະໝັກໃຈ

ບໍ່ມີການປ່ຽນແປງຕໍ່ກົດລະບຽບການລາຍງານແບບສະໝັກໃຈຂອງ CalWORKs ພາຍໃຕ້ການລາຍງານປະຈຳປີ. ທ່ານອາດຈະລາຍງານຂໍ້ມູນໃດໜຶ່ງດ້ວຍຄວາມສະໝັກໃຈ (ເຊັ່ນ: ການຫຼຸດລົງຂອງລາຍໄດ້) ທີ່ອາດຈະເຮັດໃຫ້ເພີ່ມຈຳນວນເງິນທີ່ໃຫ້ກັບທ່ານໄດ້.

## ກົດລະບຽບການລາຍງານ Welfare-to-Work

ຖ້າທ່ານໄດ້ຮັບການບໍລິການ Welfare-to-Work, ທ່ານຕ້ອງສືບຕໍ່ສົ່ງມອບບົດລາຍງານອື່ນໆ ແລະການກວດສອບທີ່ທາງຄາວຕີ້ຕ້ອງການ. ທ່ານຈຳເປັນຕ້ອງສົ່ງມອບຫຼັກຖານນີ້ ເພື່ອໃຫ້ສືບຕໍ່ໄດ້ຮັບການບໍລິການຕ່າງໆເຊັ່ນ ການດູແລເດັກ, ການຂົນສົ່ງ, ແລະເງິນຊື້ປຶ້ມ.